## ຂໍ້ມູນການເຂົ້າເມືອງ ແລະ ການຂໍວີຊາ ສຳລັບຜູ້ປະສົບໄພທາງເພດ ແລະ ຄວາມຮຸນແຮງລະຫວ່າງບຸກຄົນ

ນັກສຶກສາ ແລະ ນັກວິຊາການຕ່າງຊາດທີ່ມີຄຳຖາມກ່ຽວກັບສະຖານະການເຂົ້າເມືອງ ແລະ ການຂໍວີຊາຂອງເຂົາເຈົ້າ ຄວນໄດ້ຮັບການແນະນຳໃຫ້ຊອກຫາຄວາມຊ່ວຍເຫຼືອຈາກທະນາຍຄວາມກວດຄົນເຂົ້າເມືອງ. ເອກະສານນີ້ແມ່ນຫົນທາງທີ່ຈະອະທິບາຍບາງທິດທາງຂອງກົດໝາຍ, ແຕ່ບໍ່ໄດ້ເປັນການປ່ຽນແທນສຳລັບການໃຫ້ຄຳແນະນຳທາງດ້ານກົດໝາຍ.

**ຂ້າພະເຈົ້າເປັນຜູ້ຖືກເຄາະຮ້າຍໃນການໂຈມຕີ, ສະຖານະການເຂົ້າເມືອງຂອງຂ້າພະເຈົ້າ ຈະມີການສົ່ງຜົນກະທົບຕໍ່ຄວາມສາມາດໃນການເຂົ້າເຖິງຊັບພະຍາກອນໃນມະຫາວິທະຍາໄລບໍ່?**

ບໍ່. ພາຍໃຕ້ກົດໝາຍ, ນັກສຶກສາ ແລະ ບຸກຄະລາກອນທີ່ຖືກເຄາະຮ້າຍ ຫຼື ລອດຊີວິດຈາກຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງລະຫວ່າງບຸກຄົນ ຈະໄດ້ຮັບສິດທິເຊັ່ນດຽວກັນ ພາຍໃຕ້Title IX ຂອງການແກ້ໄຂການສຶກສາ ປີ 1972 ຫຼື 1972 Education Amendments (Title IX) ແລະ ກົດໝາຍວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງ ຫຼື Violence Against Women Act (VAWA), ໂດຍບໍ່ຈຳແນກສະຖານະການເຂົ້າເມືອງ ແລະ ການຂໍວີຊາ.

ຂໍ້ມູນກ່ຽວກັບຊັບພະຍາກອນທາງການແພດ ແລະ ການໃຫ້ຄຳປຶກສາໃນມະຫາວິທະຍາໄລ, ໄດ້ມີພ້ອມອຳນວຍຄວາມສະດວກ, ອາດຈະຊອກຫາໄດ້ທີ່: https://1is2many.okstate.edu/

ຂໍ້ມູນກ່ຽວກັບຂັ້ນຕອນການດຳເນີນການຂອງນັກສຶກສາ ອາດຈະຊອກຫາໄດ້ທີ່: https://studentconduct.okstate.edu/code

ທາງວິທະຍາໄລຈະບໍ່ຕອບໂຕ້ກັບທ່ານ ຫຼື ປະຕິບັດກັບທ່ານຢ່າງແຕກຕ່າງ ເທິງພື້ນຖານຂອງການລາຍງານອາດຊະຍາກຳ.

**ຂ້າພະເຈົ້າສາມາດຮ້ອງຟ້ອງຄະດີອາຍາ ໂດຍທີ່ຂ້າພະເຈົ້າເປັນຄົນເຂົ້າເມືອງທີ່ມີເອກະສານ ຫຼື ບໍ່ມີເອກະສານໄດ້ບໍ່?**

ໄດ້. ຂໍ້ມູນກ່ຽວກັບຄວາມໝາຍຂອງຄວາມຜິດທາງອາຍາຂອງລັດທ່ານກ່ຽວກັບ ການໂຈມຕີທາງເພດ, ຄວາມຮຸນແຮງພາຍໃນຄອບຄົວ, ຄວາມຮຸນແຮງທີ່ເກີດຂື້ນໃນຄູ່ຮັກ ແລະ ການຕິດຕາມຮຸກຮານ ອາດຈະຊອກຫາໄດ້ໃນບົດລາຍງານຄວາມປອດໄພປະຈຳປີ ຫຼື Annual Security Report: https://police.okstate.edu/annual-security-reports

ຄຳຖາມສະເພາະເຈາະຈົງກ່ຽວກັບການຍື່ນຄຳຮ້ອງຟ້ອງຄະດີອາຍາອາດຈະຈ່າໜ້າເຖິງ:

Oklahoma State University Police Department, OSUPD
104 USDA Building, Stillwater, Oklahoma 74078
405-564-6523
https://police.okstate.edu/
1is2many@okstate.edu

**ມີສະຖານະການຂໍວີຊາ ແລະ ການເຂົ້າເມືອງທີ່ສະເພາະເຈາະຈົງສຳລັບຜູ້ຖືກເຄາະຮ້າຍຂອງອາດຊະຍາກຳບໍ່?**

ມີ. ສຳລັບຜູ້ຖືກເຄາະຮ້າຍຂອງການລູ່ໂຈມທາງເພດ, ຄວາມຮຸນແຮງພາຍໃນຄອບຄົວ, ຄວາມຮຸນແຮງທີ່ເກີດຂື້ນໃນຄູ່ຮັກ ແລະ ການຕິດຕາມຮຸກຮານ, ອາດຈະມີທາງເລືອກໃນການຂໍວີຊາອື່ນໆ, ລວມທັງການຂໍວີຊາ U ແລະ T. ສຳລັບລາຍລະອຽດ, ໂອ້ລົມກັບທະນາຍຄວາມກວດຄົນເຂົ້າເມືອງ.

| ວີຊາ U | ວີຊາ T |
|---|---|
| ສຳລັບຜູ້ທີ່ຖືກເຄາະຮ້າຍຂອງການລ່ວງລະເມີດທາງຮ່າງກາຍ ຫຼື ຈິດໃຈຢ່າງເປັນຮູບປະທຳ ເປັນຜົນມາຈາກອາດຊະຍາກຳສະເພາະໃດໜຶ່ງ, ລວມມີ ການລະເມີດທາງເພດ, ຄວາມຮຸນແຮງພາຍໃນຄອບຄົວ, ການຂົ່ມຂືນ, ການໂຈມຕີ, ຫຼື ອາດຊະຍາກຳທີ່ກ່ຽວຂ້ອງອື່ນໆ<br>-ຜູ້ຖືກເຄາະຮ້າຍ/ຜູ້ຮ້ອງຂໍ ຈະຕ້ອງເປັນຜູ້ເຄາະຮ້າຍຂອງອາດຊະຍາກຳ ທີ່ມີຄຸນສົມບັດ ແລະ ມີແນວໂນ້ມທີ່ຈະເປັນປະໂຫຍດໃນການສືບສວນ ແລະ/ຫຼື ການດຳເນີນຄະດີຂອງອາດຊະຍາກຳນັ້ນ<br>-ມີຜົນໃຊ້ໄດ້ໂດຍທົ່ວໄປ ເປັນເວລາສີ່ປີ<br>-ສຳລັບຂໍ້ມູນເພີ່ມຕືມ, ປຶກສາທະນາຍຄວາມກວດຄົນເຂົ້າເມືອງ, ແລະ ເບິ່ງທີ່:<br>http://www.uscis.gov/humanitarian/victims-human-trafficking-other-crimes/victims-criminal-activity-u-nonimmigrant-status/victims-criminal-activity-u-nonimmigrant-status | ສຳລັບຜູ້ທີ່ຖືກເຄາະຮ້າຍຂອງການຄ້າມະນຸດ<br>-ຕ້ອງປະຕິບັດຕາມຄຳຂໍທີ່ເໝາະສົມຈາກອຳນາດການປົກຄອງກົດໝາຍສຳລັບຄວາມຮ່ວມມືໃນການສືບສວນ ຫຼື ການດຳເນີນຄະດີ ຕາມກົດໝາຍວ່າດ້ວຍການຄ້າມະນຸດ(ຍົກເວັ້ນກໍລະນີທີ່ບໍ່ສາມາດໃຫ້ຄວາມຮ່ວມມື ເນື່ອງຈາກການບາດເຈັບທາງຮ່າງກາຍ ຫຼື ຈິດໃຈ), ແລະ ຈະຕ້ອງສາມາດສະແດງໃຫ້ເຫັນວ່າ ຜູ້ຖືກເຄາະຮ້າຍ/ຜູ້ຮ້ອງຂໍ ຈະປະສົບຄວາມລຳບາກຫຼາຍ ຖ້າຍ້າຍອອກຈາກສະຫະລັດ ອາເມຣິກາ<br>-ມີຜົນໃຊ້ໄດ້ໂດຍທົ່ວໄປ ເປັນເວລາສີ່ປີ<br>-ສຳລັບຂໍ້ມູນເພີ່ມຕືມ, ປຶກສາທະນາຍຄວາມກວດຄົນເຂົ້າເມືອງ, ແລະ ເບິ່ງທີ່:<br>http://www.uscis.gov/humanitarian/victims-human-trafficking-other-crimes/victims-human-trafficking-t-nonimmigrant-status |

**ມີຫ້ອງການໃນມະຫາວິທະຍາໄລທີ່ສາມາດໃຫ້ຂໍ້ມູນເພີ່ມຕືມແກ່ຂ້າພະເຈົ້າບໍ່?**

, International Students & Scholars
250 Student Union, Stillwater, OK 74078
405-744-5459
https://lcl.okstate.edu/iss/
su-iss@okstate.edu

The State University of New York

ຫ້ອງການບໍລິການນັກສຶກສາ ແລະ ນັກວິຊາການຕ່າງຊາດ ສາມາດໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບສະຖານະການເຂົ້າເມືອງ. ກະລຸນາເອົາໃຈໃສ່ວ່າ ສຳລັບຄຳຖາມກ່ຽວກັບການປ່ຽນແປງໄປເປັນສະຖານະວິຊາອື່ນໆ, ຫຼື ຕົວເລືອກທາງກົດໝາຍ ທີ່ຕົກຢູ່ນອກຂອງການຂໍວິຊານັກສຶກສາ F-1 ແລະ J-1, ຫຼື ນາຍຈ້າງເປັນຜູ້ສະໜັບສະໜູນການຂໍວິຊາເຮັດວຽກ, ປຶກສາທະນາຍຄວາມກວດຄົນເຂົ້າເມືອງທີ່ມີຄຸນສົມບັດເໝາະສົມ.

| **ທາງເລືອກການຂໍວິຊາ** | |
|---|---|
| F-1 ແລະ J-1 ນັກສຶກສາສະຖານະພາບ<br>• ທາງເລືອກສຳລັບການອະນຸມັດແນວທາງຫຼຸດຜ່ອນ ອັນເນື່ອງຈາກເງື່ອນໄຂທາງການແພດໄດ້ຮັບການຢັ້ງຢືນໂດຍທ່ານໝໍທີ່ມີໃບອະນຸຍາດ, ຫຼື ທ່ານໝໍກະດູກ, ຫຼື ນັກຈິດຈະວິທະຍາຄລີນິກທີ່ມີໃບອະນຸຍາດ<br>• ທາງເລືອກສຳລັບການຖອນຕົວ ແລະ ຜົນອັນເນື່ອງມາຈາກການຖອນຕົວຈາກຫຼັກສູດການສຶກສາຂອງທ່ານ<br>• ຂໍ້ມູນກ່ຽວກັບການກັບຄືນໄປທີ່ຫຼັກສູດການສຶກສາໃນພາຍຫຼັງ, ໃນກໍລະນີທີ່ນັກສຶກສາເລືອກທີ່ຈະຖອນຕົວ<br>• ທາງເລືອກ ແລະ ຜົນທີ່ມາພ້ອມກັບຄູ່ສົມຣົດ<br>• ຂໍ້ມູນທົ່ວໄປກ່ຽວກັບທາງເລືອກສຳລັບການປ່ຽນສະຖານະວິຊາ.<br>• ຂໍ້ມູນທົ່ວໄປກ່ຽວກັບວິຊາ U ແລະ T. (ອ້າງອີງໄປທີ່ທະນາຍຄວາມກວດຄົນເຂົ້າເມືອງທີ່ມີຄຸນສົມບັດເໝາະສົມ)<br>• ອ້າງອີງໄປທີ່ທະນາຍຄວາມທີ່ມີຄຸນສົມບັດເໝາະສົມ | H-1B, O-1, E-3, ຫຼື TN ຜູ້ໄດ້ຮັບການຈ້າງວຽກ<br>• ທາງເລືອກສຳລັບການລາພັກວຽກ, ແລະ ຜົນທີ່ມີຕໍ່ສະຖານະການເຂົ້າເມືອງຂອງທ່ານ<br>• ທາງເລືອກ ແລະ ຜົນທີ່ມາພ້ອມກັບຄູ່ສົມຣົດ<br>• ຂໍ້ມູນທົ່ວໄປກ່ຽວກັບທາງເລືອກສຳລັບການປ່ຽນສະຖານະວິຊາ. ອ້າງອີງໄປທີ່ທະນາຍຄວາມກວດຄົນເຂົ້າເມືອງທີ່ມີຄຸນສົມບັດເໝາະສົມ<br>• ຂໍ້ມູນທົ່ວໄປກ່ຽວກັບວິຊາ U ແລະ T. (ອ້າງອີງໄປທີ່ທະນາຍຄວາມກວດຄົນເຂົ້າເມືອງທີ່ມີຄຸນສົມບັດເໝາະສົມ)<br>• ອ້າງອີງໄປທີ່ທະນາຍຄວາມກວດຄົນເຂົ້າເມືອງທີ່ມີຄຸນສົມບັດເໝາະສົມ<br>• ກຳລັງລໍຖ້າການດຳເນີນການຢູ່ອາໄສຖາວອນໃນສະຫະລັດ ອາເມຣິກາ (ບັດຂຽວຍັງບໍ່ທັນໄດ້ຮັບການອະນຸມັດ)<br>• ຜົນກະທົບຂອງການອອກຈາກວຽກຂອງທ່ານຕໍ່ການລໍຖ້າການສະໜັບ ສະໜູນຈາກນາຍຈ້າງ ເພື່ອຮ້ອງຂໍການຢູ່ອາໄສຖາວອນ;<br>• ອ້າງອີງໄປທີ່ທະນາຍຄວາມທີ່ມີຄຸນສົມບັດເໝາະສົມ |

**ນັກກົດໝາຍກວດຄົນເຂົ້າເມືອງແມ່ນຫຍັງ ແລະ ພວກເຂົາເຮັດຫຍັງ?**

ນັກກົດໝາຍກວດຄົນເຂົ້າເມືອງ ແມ່ນຜູ້ຮັບມອບອຳນາດທີ່ໄດ້ຮັບໃບອະນຸຍາດ ເຊິ່ງມີຄວາມຊ່ຽວຊານໃນຂົງເຂດກົດໝາຍກວດຄົນເຂົ້າເມືອງ. ພວກເຂົາເຮັດວຽກເປັນຜູ້ສະໜັບສະໜູນລູກຄ້າ, ແລະ ສາມາດເປັນຕົວແທນລູກຄ້າກ່ອນໜ່ວຍງານກວດຄົນເຂົ້າເມືອງ, ທັງໃນບ່ອນກວດຄົນເຂົ້າເມືອງ ເຊັ່ນດຽວກັບການຍື່ນຄຳຮ້ອງເພື່ອຜົນປະໂຫຍດການເຂົ້າເມືອງ. ນັກກົດໝາຍສາມາດໃຫ້ຄຳແນະນຳທົ່ວໄປ ແລະ ສາມາດເວົ້າເຖິງທາງເລືອກການເຂົ້າເມືອງ. ເຊັ່ນດຽວກັນກັບນັກກົດໝາຍທັງໝົດ, ນັກກົດໝາຍກວດຄົນເຂົ້າເມືອງຈະຕ້ອງປະຕິບັດຕາມຂໍ້ກຳນົດຈະລິຍະທຳ ແລະ ກົດໝາຍຢ່າງເປັນມືອາຊີບ, ແລະ ຮັກສາການສົນທະນາທີ່ເປັນຄວາມລັບຂອງລູກຄ້າ.

**ຂ້າພະເຈົ້າສາມາດຊອກຫາທະນາຍຄວາມກວດຄົນເຂົ້າເມືອງທ້ອງຖິ່ນໄດ້ຢູ່ໃສ?**

| |
|---|
| ກະຊວງການບໍລິການພົນລະເມືອງສະຫະລັດອາເມຣິກາ ແລະ ບໍລິການກວດຄົນເຂົ້າເມືອງ ຫຼື U.S. Citizenship and Immigration Services (USCIS), ສຳນັກງານຂອງກະຊວງຄວາມໝັ້ນຄົງແຫ່ງມາຕຸພູມ ຫຼື Department of Homeland Security (DHS), ສະເໜີສອງເວັບໄຊທີ່ຈະຊ່ວຍໃຫ້ປະຊາຊົນຊອກຫາຕົວແທນທາງກົດໝາຍທີ່ບໍ່ເສຍຄ່າໃຊ້ຈ່າຍ ຫຼື ເສຍຄ່າໃຊ້ຈ່າຍຕ່ຳ ດັ່ງນີ້:<br><br>USCIS: ຊອກຫາຄວາມຊ່ວຍເຫຼືອໃນໜ້າເວັບຊຸມຊົນຂອງທ່ານ USCIS: ຊອກຫາໜ້າເວັບບໍລິການທາງກົດໝາຍ |
| ຄະນະກຳມະການການອຸທອນກວດຄົນເຂົ້າເມືອງ (BIA) ໃຫ້ລາຍຊື່ຂອງທະນາຍຄວາມ ໂດຍລັດທີ່ໃຫ້ບໍລິການກວດຄົນເຂົ້າເມືອງ ທັງບໍ່ເສຍຄ່າໃຊ້ຈ່າຍ ຫຼື ເສຍຄ່າໃຊ້ຈ່າຍເລັກໆນ້ອຍໆ. |
| ສະມາຄົມນັກກົດໝາຍກວດຄົນເຂົ້າເມືອງຂອງອາເມຣິກາ ຫຼື The American Immigration Lawyers Association (AILA) ສະເໜີນັກກົດໝາຍກວດຄົນເຂົ້າເມືອງອອນໄລນ໌ ອ້າງອີງບໍລິການທີ່ສາມາດຊ່ວຍນັກສຶກສາ ຫຼື ນັກວິຊາການໃຫ້ຊອກຫານັກກົດໝາຍກວດຄົນເຂົ້າເມືອງ. |
| ນອກຈາກນັ້ນ ເນຕິບັນດິດຍະສະພາແຫ່ງປະເທດສະຫະລັດອາເມຣິກາ ຫຼື The American Bar Association ກໍຍັງໃຫ້ຂໍ້ມູນກ່ຽວກັບການຊອກຫາບໍລິການທາງກົດໝາຍໂດຍລັດອີກດ້ວຍ. |

The State University of New York